ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------

ກະຊວງສາທາລະນະສຸກ ເລກທີ 519/ກຊສ

ນະຄອນຫລວງວຽງຈັນ, ວັນທີ 18 ມີນາ 2009

# ຂໍ້ຕົກລົງ
# ວ່າດ້ວຍສະຫລາກຂອງຜະລິດຕະພັນອາຫານທີ່ບັນຈຸໃນເຄື່ອງຫຸ້ມຫໍ່

- ອີງຕາມ ກົດໝາຍວ່າດ້ວຍອາຫານ, ສະບັບເລກທີ 04/ສພຊ, ລົງວັນທີ 15 ພຶດສະພາ 2004.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວຂອງກະຊວງ ສາທາລະນະສຸກ. ສະບັບເລກທີ 114/ນຍ, ລົງວັນທີ 04 ກໍລະກົດ 2008.
- ອີງຕາມ ການສະເໜີຂອງກົມອາຫານ ແລະ ຢາ

**ລັດຖະມົນຕີວ່າການກະຊວງສາທາລະນະສຸກ ອອກຂໍ້ຕົກລົງ:**

## ໝວດທີ I
## ຫລັກການທົ່ວໄປ

**ມາດຕາ 1. ຈຸດປະສົງ ແລະ ລະດັບຄາດໝາຍ.**

**1.ຈຸດປະສົງ**

ເພື່ອກຳນົດຫຼັກການ, ລະບຽບການ ແລະ ມາດຕະການຕ່າງໆກ່ຽວກັບສະຫຼາກ ແລະ ການໃສ່ສະ ຫຼາກອາຫານ ສຳລັບອາຫານທີ່ບັນຈຸໃນເຄື່ອງຫຸ້ມຫໍ່ ແນໃສ່ເພື່ອຕິດຕາມ, ກວດກາ ສະຫຼາກ ແລະ ອາຫານ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ເພື່ອເປັນການຊຸກຍູ້ຫົວໜ່ວຍທຸລະກິດຜະລິດອາຫານໃຫ້ມີ ການຂະຫຍາຍຕົວ.

**2.ລະດັບຄາດຫມາຍ**

- ເປັນເຄື່ອງມືໃນການຄຸ້ມຄອງ ຕິດຕາມ ກວດກາການຜະລິດ, ການປຸງແຕ່ງ, ນຳເຂົ້າ, ສົ່ງອອກ ສົ່ງອອກ,ຈຳໜ່າຍ ແລະ ເກັບຮັກສາຜະລິດຕະພັນອາຫານທີ່ບັນຈຸໃນເຄື່ອງຫຸ້ມຫໍ່ ຢູ່ສປປລາວ.
- ປົກປ້ອງສຸຂະພາບຂອງຜູ້ບໍລິໂພກ ດ້ວຍການສະໜອງຂໍ້ມູນທີ່ຖືກຕ້ອງກ່ຽວກັບອາຫານທີ່ບັນຈຸ ໃນເຄື່ອງ ຫຸ້ມຫໍ່.

**ມາດຕາ 2. ຂອບເຂດນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຂອບເຂດການນຳໃຊ້ ຕໍ່ຫົວໜ່ວຍທຸລະກິດຜະລິດ, ປຸງແຕ່ງ, ແບ່ງບັນຈຸ, ນຳ ເຂົ້າ-ສົ່ງອອກ ແລະ ຈຳໜ່າຍຜະລິດຕະພັນອາຫານທີ່ບັນຈຸໃນເຄື່ອງຫຸ້ມຫໍ່.

**ມາດຕາ 3. ຄວາມຫມາຍຂອງຄຳສັບ**

- **ຂໍ້ກ່າວອ້າງ (claim)** ໝາຍເຖິງ ທຸກຂໍ້ມູນທີ່ໄດ້ແຈ້ງ, ແນະນຳ ຫຼື ສະແດງເຖິງອາຫານທີ່ມີຄຸນນະ ພາບສະເພາະ ຊຶ່ງພົວພັນກັບ ຕົ້ນກຳເນີດ, ຄຸນສົມບັດທາງດ້ານໂພຊະນາການ, ຄຸນລັກສະນະ, ກຳມະວິ ທີ, ສ່ວນປະກອບ ຫຼື ຄຸນ ນະພາບອື່ນໆ.

- **ວັນທີທີ່ຄວນບໍລິໂພກກ່ອນ (Best before date)** ໝາຍເຖິງ ວັນເດືອນປີ ຂອງການປະເມີນການ ສິ້ນສຸດ ອາຍຸການນຳໃຊ້ຜະລິດຕະພັນອາຫານ ທີ່ຢູ່ພາຍໃຕ້ທຸກເງື່ອນໄຂຂອງການເກັບຮັກສາທີ່ໄດ້ກຳ ນົດ. ຜະລິດຕະພັນອາຫານທີ່ໝົດກຳນົດວັນທີ ທີ່ບໍ່ຄວນບໍລິໂພກແລ້ວ ແມ່ນບໍ່ອະນຸຍາດໃຫ້ວາງຂາຍ ທົ່ວໄປ.
- **ວັນໝົດອາຍຸ ຫຼື ວັນໝົດຂອບເຂດຂອງການນຳໃຊ້ (Expiry date or use by date )** ໝາຍເຖິງ ວັນເດືອນປີ ຂອງການສິ້ນສຸດໄລຍະເວລາທີ່ໄດ້ຄາດຄະເນ ຊຶ່ງຜະລິດຕະພັນນັ້ນບໍ່ມີ ຄວາມສົດ ແລະ ບໍ່ມີຄຸນນະພາບ, ພາຍໃຕ້ເງື່ອນໄຂຂອງການເກັບຮັກສາທີ່ໄດ້ກຳນົດ. ຫຼັງຈາກວັນໝົດອາຍຸແລ້ວ, ອາ ຫານບໍ່ຄວນບໍລິໂພກ ແລະ ບໍ່ອະນຸຍາດໃຫ້ວາງຂາຍທົ່ວໄປ.
- **ອາຫານ** ໝາຍເຖິງ ອາຫານແມ່ນວັດຖຸໃດໜຶ່ງທີ່ຄົນເຮົາກິນ, ດື່ມ ຊຶ່ງຢູ່ໃນຮູບແບບສົດ, ສຸກ, ດິບ ຫຼື ໄດ້ຜ່ານການປຸງແຕ່ງແລ້ວ ຍົກເວັ້ນຢາປົວພະຍາດ.
- **ຜະລິດຕະພັນອາຫານ** ໝາຍເຖິງ ອາຫານທີ່ບັນຈຸໃນພາຊະນະຫຸ້ມຫໍ່ໃດໜຶ່ງ ຊຶ່ງມີສະຫລາກຕິດ ຫຼື ໃສ່ ມານຳ ອາດຈະເປັນອາຫານດິບ, ອາຫານເຄິ່ງສຳເລັດຮູບ ຫຼື ອາຫານສຳເລັດຮູບ.
- **ທາດເພີ້ມ (food additive)** ໝາຍເຖິງ ບັນດາສານທີ່ຕື່ມເຂົ້າໃສ່ອາຫານ ເພື່ອຈຸດປະສົງການຜະ ລິດ, ການປຸງແຕ່ງ, ການບຳບັດ, ການບັນຈຸມັດຫໍ່, ການຂົນສົ່ງ ຫຼື ການເກັບມ້ຽນຮັກສາ. ທາດເພີ້ມ ດັ່ງກ່າວບໍ່ກວມເອົາສານທີ່ມີຄຸນນະພາບທາງດ້ານໂພຊະນາການ ແລະ ການປົນເປື້ອນ ອື່ນໆ..
- **ສ່ວນປະກອບ (Ingredient)** ໝາຍເຖິງ ທຸກໆສານ ລວມທັງທາດເພີ້ມ ທີ່ໄດ້ນຳໃຊ້ ໃນການຜະລິດ, ແປຮູບ ຫຼື ປຸງແຕ່ງ ຫຼື ບຳບັດອາຫານ ແລະ ອາດມີໃນຜະລິດຕະພັນສຸດທ້າຍ.
- **ລະບົບວັດແທກແມັດຕຼິກ (metric system)** ແມ່ນລະບົບວັດແທກມາດຕະຖານອັນໜຶ່ງ ຊຶ່ງ ມີຫົວໜ່ວຍເປັນແມັດ, ລິດ ແລະ ກຼາມ ທີ່ໃຊ້ກຳນົດວັດແທກ ແລະ ປຽບທຽບທາງດ້ານຄວາມຍາວ, ບໍລິມາດ ແລະ ນ້ຳໜັກ.
- **ລະບົບວັກແທກອິມເພຣຽນ(Imperial system)** ແມ່ນລະບົບວັດແທກມາດຕະຖານອັນໜຶ່ງ ທີ່ໃຊ້ຢາດ (yards), ຟີດ(feet) ແລະ ນີ້ວ(inches) ເປັນຫົວໜ່ວຍວັດແທກຄວາມຍາວ; ເກລອນ(gallon) ເປັນ ພື້ນຖານຫົວໜ່ວຍວັດແທກບໍລິມາດ ແລະ ປອນ(pounds) ແລະ ອອນ (ounces) ເປັນພື້ນຖານຫົວ ໜ່ວຍວັດແທກນ້ຳໜັກ.
- **ສະຫລາກ(label)** ໝາຍເຖິງ ປ້າຍ, ຍີ່ຫໍ້, ກາ, ເຄື່ອງໝາຍ, ຮູບພາບ ຫຼື ຂໍ້ຄວາມຂອງການພັນ ລະນາດ້ວຍການຂຽນ, ການພິມ, ຮູບພິມທີ່ມີລັກສະນະນູນຂຶ້ນ ຫຼື ປະທັບຕາຢູ່ເທິງ ຫຼື ຕິດຢູ່ພາຊະນະ ບັນຈຸອາຫານ ຫຼື ຕິດມານຳອາຫານ, ລວມທັງຈຸດປະສົງຂອງການສົ່ງເສີມໃນການຂາຍ ແລະ ການນຳໃຊ້.
- **ຊື່ອາຫານ** ໝາຍເຖິງ ຊື່ ຫຼື ການພັນລະນາສະເພາະຂອງຜູ້ຜະລິດ ແລະບໍ່ແມ່ນຊື່ທົ່ວໄປ ຫຼື ການພັນລະນາທົ່ວໄປຊຶ່ງສະແດງໃຫ້ຜູ້ບໍລິໂພກເຫັນໄດ້ທຳມະຊາດ ຫຼື ຄຸນລັກສະນະທີ່ແທ້ຈິງ ຂອງສ່ວນປະ ກອບ ຫຼື ຜະລິດຕະພັນທີ່ໄດ້ນຳໃຊ້.
- **ສະຫລາກທາງດ້ານໂພຊະນາການ** ແມ່ນການພັນລະນາທີ່ມີເຈດຕະນາແຈ້ງໃຫ້ຜູ້ບໍລິໂພກ ເຂົ້າໃຈກ່ຽວ ກັບທາດບຳລຸງລ້ຽງ ທີ່ບັນຈຸໃນຜະລິດຕະພັນອາຫານນັ້ນ.
- **ເຄື່ອງຫຸ້ມຫໍ່ (Prepackaged)** ໝາຍເຖິງ ວັດຖຸຫຸ້ມຫໍ່ ຫຼື ວັດຖຸຫຸ້ມຫໍ່ທີ່ໄດ້ກະກຽມລ່ວງໜ້າ ເພື່ອກຽມພ້ອມໃນການບັນຈຸອາຫານ ແນໃສ່ສະໜອງໃຫ້ຜູ້ບໍລິໂພກ ຫຼື ສຳລັບຈຸດປະສົງຂອງການບໍລິການ ຂາຍອາຫານໃນວິທີການຊຶ່ງສິ່ງບັນຈຸບໍ່ສາມາດດັດແປງແກ້ໄຂ ໂດຍປັດສະຈາກການເປີດ ຫຼື ປ່ຽນແປງການມັດຫໍ່.

## ໝວດທີ II
## ສະຫລາກ ແລະເນື້ອໃນຂອງສະຫລາກ

### ມາດຕາ 4. ສະຫລາກອາຫານ

ອາຫານທີ່ຜະລິດ, ປຸງແຕ່ງ, ບັນຈຸຫຸ້ມຫໍ່ ເພື່ອຈຳໜ່າຍ ຫຼື ແຈກຢາຍຢູ່ ສປປລາວ ຍົກເວັ້ນເຄື່ອງ ສຳອາງ ຫຼື ເຫຼົ້າ ຕ້ອງໃສ່ສະຫລາກທີ່ຖືກຕ້ອງ. ໃນສະຫລາກ ນອກຈາກໄດ້ສະແດງເຄື່ອງໝາຍ ຫຼື ກົນໄກ ການຄ້າແລ້ວ, ຍັງປະກອບດ້ວຍບັນດາຂໍ້ມູນພື້ນຖານ ຕາມການກຳນົດ ດັ່ງລຸ່ມນີ້:

- ຊື່ຂອງອາຫານ;
- ສ່ວນປະສົມ ຫຼື ສ່ວນປະກອບຂອງອາຫານ;
- ນ້ຳໜັກ ຫຼື ບໍລິມາດ ໃນການບັນຈຸ;
- ຊື່ ທີ່ຢູ່ ແລະ ເງື່ອນໄຂ ໃນການຕິດຕໍ່ ຂອງຜູ້ຜະລິດ;
- ຄຳແນະນຳກ່ຽວກັບການເກັບຮັກສາ ແລະ/ຫຼື ການນຳໃຊ້;
- ວັນເດືອນປີ ຜະລິດ ແລະ ໝົດອາຍຸ;
- ຊຸດ ຜະລິດ ຫຼື ເຄື່ອງໝາຍການຄ້າ;
- ເລກທີຂຶ້ນທະບຽນຜະລິດຕະພັນອາຫານ (ຖ້າມີ);
- ຄຳເຕືອນ (ຖ້າມີ);

## ມາດຕາ 5. ເນື້ອໃນທີ່ສະແດງໃນສະຫລາກ

1 ທຸກຜະລິດຕະພັນອາຫານທີ່ບັນຈຸໃນເຄື່ອງຫຸ້ມຫໍ່; ຍົກເວັ້ນເຄື່ອງສຳອາງ ຫຼື ເຫຼົ້າ ເພື່ອຈຳໜ່າຍ ຕ້ອງໃສ່ສະຫລາກ ມີເນື້ອໃນທີ່ຖືກຕ້ອງ ຕາມການກຳນົດ ດັ່ງລຸ່ມນີ້:

**(ກ)** ຊື່ຂອງອາຫານ**;**

**(ຂ)** ລາຍຊື່ຂອງສ່ວນປະກອບ**.**

(1) ຖ້າອາຫານໃດໜຶ່ງຫາກມີສ່ວນປະກອບ ແຕ່ສອງຊະນິດຂຶ້ນໄປ ນອກຈາກນ້ຳ, ສ່ວນປະກອບອື່ນ ຕ້ອງໄດ້ຈັດລຽງຕາມອັດຕາສ່ວນຂອງນ້ຳຫນັກ (ມວນສານ/ມວນສານ) ແຕ່ ໃຫຍ່ຫານ້ອຍ.

(2) ຖ້າອາຫານໃດໜຶ່ງຫາກມີສ່ວນປະກອບ ທີ່ໄດ້ມາຈາກບາງເຕັກນິກ ຂອງການດັດແປງພັນທຸກຳ/ວິສະວະກຳທາງດ້ານພັນທຸກຳ, ຕ້ອງໄດ້ບອກແຈ້ງຢູ່ໃນສະຫລາກ ເຊັ່ນ: ອາຫານທີ່ປຸງ ແຕ່ງມາຈາກພືດ ຫຼື ສັດ ດັດແຕ່ງພັນທຸກຳ (GMO).

(3) ຖ້າອາຫານໃດໜຶ່ງຫາກປະກອບດ້ວຍທາດເພີ່ມຕ້ອງໄດ້ແຈ້ງຊື່, ຊະນິດ ຫຼື ປະເພດຂອງທາດເພີ່ມນັ້ນ. ພ້ອມກັນນັ້ນ ກໍຄວນລະບຸລະບົບການໃສ່ເລກທີສາກົນ(International Numbering System (INS).

(4) ຕ້ອງແຈ້ງກ່ຽວກັບສ່ວນປະກອບອາຫານທີ່ໄດ້ບຳບັດ ໂດຍການໃຊ້ແສງອີອົງ ການສາຍແສງ ຫຼື ສາຍລັງສີ (Ionizing radiation).

(5) ຕ້ອງໄດ້ແຈ້ງສ່ວນປະກອບອາຫານ ທີ່ເຫັນວ່າ ຫຼື ມັກກໍ່ໃຫ້ເກີດອາການແພ້, ບາງຕົວຢ່າງ ດັ່ງລຸ່ມນີ້:

- ພືດພັນທັນຍາຫານທີ່ບັນຈຸ ທາດກລຸຍເຕັນ (gluten)ເຊັ່ນ: ເຂົ້າວີດ(wheat), ເຂົ້າໄຣ(rye), ເຂົ້າບາເລ (barley), ເຂົ້າໂອດ(oat), ສະແປວ(spelt) ຫຼື ສາຍພັນ ແລະ ຜະລິດຕະພັນຂອງມັນ;
- ກຸ້ງ ແລະ ຜະລິດຕະພັນກຸ້ງ;
- ໄຂ່ ແລະ ຜະລິດຕະພັນໄຂ່
- ປາ ແລະ ຜະລິດຕະພັນປາ
- ຖົ່ວດິນ, ຖົ່ວຂຽວ ແລະ ຜະລິດຕະພັນຂອງມັນ
- ນົມ ແລະ ຜະລິດຕະພັນນົມ (ລວມທັງ lactose)
- ຖົ່ວເປືອກແຂງ(Tree nut) ແລະ ຜະລິດຕະພັນຂອງມັນ
- ຊັນໄຟ(Sulphite)ໃນຄວາມເຂັ້ມຂຸ້ນ 10 mg/kg ຫຼື ຫຼາຍກ່ວານັ້ນ

**(ຄ)** ການບັນຈຸສຸດທິ ແລະ ນ້ຳຫນັກທີ່ບໍ່ມີນ້ຳ

(1) ການບັນຈຸສຸດທິ ຫຼື ນໍ້າໜັກທີ່ບໍ່ມີນໍ້າ ຕ້ອງໄດ້ແຈ້ງເປັນລະບົບວັດແທກເມຕຼິກ (ລະບົບທົດ ໜ່ວຍສາກົນ) ຫຼື ທັງລະບົບວັດແທກເມຕຼິກ ແລະ ລະບົບວັດແທກອິມພີຣຽນ (imperial system)

(2) ສໍາລັບອາຫານແຂງເປັນກ້ອນ ໃຫ້ແຈ້ງເປັນນໍ້າໜັກ; ສໍາລັບອາຫານທີ່ເປັນທາດແຫຼວ ໃຫ້ແຈ້ງເປັນບໍລິມາດ; ສໍາລັບອາຫານເປັນທາດເຄິ່ງແຂງ ຫຼື ອາຫານທີ່ໜຽວໃຫ້ແຈ້ງ ເປັນນໍ້າໜັກ ຫຼື ບໍລິມາດ.

**(ງ)** ຊື່ ແລະ ທີ່ຢູ່ຂອງສະຖານທີ່ຜະລິດ, ປຸງແຕ່ງ, ຫຸ້ມຫໍ່ ຫຼື ຈໍາໜ່າຍ

(1) ໃນກໍລະນີອາຫານປຸງແຕ່ງ ຫຼື ບັນຈຸຫຸ້ມຫໍ່ຢູ່ພາຍໃນປະເທດ, ຕ້ອງໄດ້ແຈ້ງຊື່ ແລະ ບ່ອນຢູ່ ຂອງສະຖານທີ່ຜະລິດປຸງແຕ່ງ ຫຼື ບັນຈຸຫຸ້ມຫໍ່ ຫຼື ຈໍາໜ່າຍ ຫຼື ເຈົ້າຂອງ ລິຂະສິດ.

(2) ສໍາລັບອາຫານນໍາເຂົ້າ, ຕ້ອງໄດ້ແຈ້ງຊື່ ແລະ ບ່ອນຢູ່ຂອງຜູ້ນໍາເຂົ້າ ແລະ/ຫຼື ຜູ້ຈໍາໜ່າຍ ແລະ ປະເທດຕົ້ນທາງຂອງອາຫານ.

(3) ໃນເມື່ອອາຫານນັ້ນ ຫາກຖືກປຸງແຕ່ງໃນປະເທດທີສອງ ໂດຍມີການປ່ຽນແປງຄຸນລັກສະນະ ຂອງມັນ, ປະເທດທີ່ໄດ້ດໍາເນີນການປຸງແຕ່ງນັ້ນ ຕ້ອງແຈ້ງເປັນປະເທດຕົ້ນທາງ ຂອງການ ຜະລິດ.

**(ຈ)** ການໃສ່ຊື່, ວັນທີ ແລະ ຂໍ້ແນະນໍາໃນການເກັບຮັກສາ

(1) ການໃສ່ຊື່ ວັນທີໝົດອາຍຸ ແລະ ວັນທີ ທີ່ຄວນບໍລິໂພກກ່ອນ ແລະ ວັນທີທີ່ຜະລິດ/ໝົດອາຍຸ ຂອງຜະລິດຕະພັນອາຫານ ຄວນຢູ່ໃນບອ່ນ ແລະ ມີລັກສະນະທີ່ຈະແຈ້ງ: ວັນທີ/ເດືອນ/ປີ ຕ້ອງແຈ້ງເປັນຕົວເລກ ຍົກເວັ້ນ ເດືອນ ຕ້ອງໄດ້ແຈ້ງເປັນຕົວໜັງສື (ສາກົນ) ຊຶ່ງນໍາໃຊ້ ເພື່ອບໍ່ໃຫ້ຜູ້ບໍລິໂພກສັບສົນ ຊຶ່ງຕ້ອງພິມ ຫຼື ໝາຍແບບຖາວອນ ໃສ່ສະຫລາກ.

(2) ການແຈ້ງຂໍ້ແນະນໍາໃນການເກັບຮັກສາອາຫານ ຕ້ອງອີງໃສ່ຄຸນລັກສະນະສະເພາະ ຂອງແຕ່ ລະຊະນິດອາຫານ ຫຼື ເງື່ອນໄຂການນໍາໃຊ້ໃດນຶ່ງ.

**(ສ)** ການໃສ່ເລກທະບຽນ ກອຍ ຜະລິດຕະພັນອາຫານຕ້ອງໄດ້ຈົດທະບຽນ ໂດຍມີເລກທະບຽນ ກອຍ ຊຶ່ງໄດ້ຖືກຮັບຮອງ ໂດຍກົມອາຫານແລະຢາ ແລະ ມີອາຍຸການໃຊ້ໄດ້.

**(ຊ)** ຂໍ້ແນະນໍາສໍາລັບການນໍາໃຊ້ ສໍາລັບອາຫານສະເພາະໃດໜຶ່ງ ທີ່ມີຄວາມຈໍາເປັນເພື່ອນໍາໃຊ້ໃຫ້ຖືກ ຕ້ອງເໝາະສົມ ຕ້ອງໄດ້ແຈ້ງຂໍ້ແນະນໍາໃນການນໍາໃຊ້ ລວມທັງຂໍ້ບັງຄັບຖ້າມີ.

2 ພາສາທີ່ໃຊ້ໃນສະຫລາກຂອງຜະລິດຕະພັນອາຫານ ທີ່ຜະລິດພາຍໃນ ຕ້ອງເປັນພາສາລາວ ຫຼື ທັງພາ ສາລາວ ແລະ ພາສາອັງກິດ. ສໍາລັບຜະລິດຕະພັນອາຫານນໍາເຂົ້າກໍ່ຕ້ອງມີພາສາລາວ ແລະ/ຫຼື ພາສາ ອັງກິດ ຫຼື ພາສາຂອງປະເທດຕົ້ນທາງ ແລະ ພາສາອັງກິດ

3 ຊື່ຂອງອາຫານ, ການບັນຈຸສຸດທິ ແລະ ການໃສ່ວັນທີທີ່ຜະລິດ ແລະ/ຫຼື ໝົດອາຍຸຂອງອາຫານ ຕ້ອງປະກົດຢູ່ໃນຕໍາແໜ່ງທີ່ເຫັນໄດ້ຈະແຈ້ງ.

4 ລາຍລະອຽດຂອງເນື້ອໃນທີ່ໄດ້ກ່າວໃນຂໍ້ 1 ຕ້ອງຊັດເຈນ ອ່ານງ່າຍ, ເຂົ້າໃຈແຈ້ງ ແລະ ບໍ່ສາມາດລຶບໄດ້.

5 ອາຫານທີ່ມີຈຸດປະສົງເພື່ອສົ່ງອອກ ຕ້ອງມີລາຍລະອຽດ ດັ່ງທີ່ໄດ້ກ່າວໄວ້ໃນ ຂໍ້ 5.1 ຊຶ່ງອາດ ເປັນທັງ ພາສາລາວ ແລະ ອັງກິດ ຫຼື ຕາມການຕົກລົງຂອງປະເທດນໍາເຂົ້າ.

## ມາດຕາ 6. ການໃສ່ສະຫລາກຕາມການຮຽກຮ້ອງສະເພາະ ໃນການສົ່ງອອກ

1 ການໃສ່ສະຫລາກສະເພາະ ອາດປະຕິບັດບົນພື້ນຖານຕາມການຮຽກຮ້ອງຂອງຜູ້ບໍລິໂພກ ສະເພາະຂອງ ປະເທດນັ້ນໆ , ໂດຍອີງໃສ່ ສິ່ງແວດລ້ອມທາງດ້ານສາດສະໜາ ແລະ ພຶດຕິກໍາ ໃນການບໍລິໂພກອາ ຫານ ຄື:

(ກ) ຖ້າອາຫານບັນຈຸໄຂມັນ ຫຼື ນໍ້າມັນ ທີ່ກິນໄດ້ ຫຼື ທັງສອງ, ຕ້ອງບອກແຈ້ງ ຊື່ທົ່ວໄປຂອງ ສັດ ຫຼື ພືດ ທີ່ໃຫ້ທາດດັ່ງກ່າວ.

(ຂ) ຕ້ອງໄດ້ບອກແຈ້ງຢູ່ໃນສະຫຼາກອາຫານ ຖ້າມີສ່ວນປະກອບ ຫຼື ທາດເພີ້ມທີ່ມາຈາກສັດ ເຊັ່ນ: ງົວ, ໝູ, ໝາ,... ແລະ ຜະລິດຕະພັນຂອງສັດດັ່ງກ່າວ.

(ຄ) ຖ້າຫາກໄດ້ຕື່ມເຫຼົ້າເຂົ້າໃນຜະລິດຕະພັນອາຫານ ຕ້ອງໄດ້ກຳນົດແຈ້ງເປັນຕົວໜັງສືໂຕ ໃຫຍ່ເຂັ້ມ "**ບັນຈຸເຫຼົ້າ**"

(ງ) ສຳລັບອາຫານທີ່ໃຊ້ສະເພາະສາສະໜາ ຕ້ອງໄດ້ບອກແຈ້ງເຄື່ອງໝາຍ ຫຼື ກາໝາຍ ທີ່ຮັບຮູ້ກ່ຽວ ກັບສາສະໜາ ເຊັ່ນ: halal ຫຼື kosher....

2 ສະຫລາກ ແລະ ຂໍ້ກ່າວອ້າງສະເພາະທາງດ້ານໂພຊະນາການ ແມ່ນໃຫ້ອີງຕາມຄວາມຮຽກຮ້ອງ ຕ້ອງ ການຂອງປະເທດນັ້ນ.

(ກ) ການແຈ້ງທາງດ້ານພະລັງງານ, ທາດຊີ້ນ, ທາດໄຂມັນ ແລະ ທາດແປ້ງ.

(ຂ) ຂໍ້ມູນກ່ຽວກັບ ມູນຄ່າທາງດ້ານພະລັງງານ ຄວນໄດ້ສະແດງອອກ ເປັນ:

- kcal ຕໍ່ 100 g ຫຼື ຕໍ່ 100 ml ຫຼື;
- kcal ຕໍ່ ຫີບຫໍ່ ຖ້າຫີບຫໍ່ ຫາກບັນຈຸ ສຳລັບບໍລິໂພກພຽງຄັ້ງດຽວ ຊຶ່ງເປັນປະລິມານ ທີ່ແຈ້ງ ຢູ່ໃນສະຫລາກ ຫຼື;
- kcal ຕໍ່ ກອ່ງ ທີ່ສະຫນອງເປັນຈຳນວນຂອງກ່ອງ ທີ່ໄດ້ບັນຈຸໃນຫີບຫໍ່ທີ່ໄດ້ກ່າວໄວ້.

(ຄ) ຂໍ້ມູນກ່ຽວກັບປະລິມານຂອງ ທາດຊີ້ນ(Protein), ທາດແປ້ງ (Carbohydrate) ແລະ ທາດໄຂ ມັນໃນອາຫານ ຄວນໄດ້ສະແດງອອກເປັນ:

- g ຕໍ່ 100 g ຫຼື ຕໍ່100 ml ຫຼື
- g ຕໍ່ ຫີບຫໍ່ ຖ້າຫີບຫໍ່ ຫາກບັນຈຸ ສຳລັບບໍລິໂພກພຽງຄັ້ງດຽວ ຊຶ່ງເປັນປະລິມານທີ່ແຈ້ງຢູ່ ໃນສະຫລາກ ຫຼື
- g ຕໍ່ ກອ່ງ ທີ່ສະຫນອງ ເປັນຈຳນວນຂອງກ່ອງ ທີ່ໄດ້ບັນຈຸໃນຫີບຫໍ່ທີ່ໄດ້ກ່າວໄວ້.

(ງ) ຂໍ້ມູນທີ່ເປັນຕົວເລກກ່ຽວກັບໄວຕາມິນ ແລະ ເກືອແຮ່ ຄວນໄດ້ສະແດງອອກເປັນຫົວໜ່ວຍ ເມຕຼິກ ແລະ /ຫຼື ເປັນເປີເຊັນ ຂອງມູນຄ່າທາງດ້ານໂພຊະນາການ

- ຕໍ່100 g ຫຼື ຕໍ່ 100 ml ຫຼື
- ຕໍ່ ຫີບຫໍ່ ຖ້າຫີບຫໍ່ຫາກບັນຈຸສຳລັບບໍລິໂພກພຽງຄັ້ງດຽວ ຊຶ່ງເປັນປະລິມານທີ່ແຈ້ງຢູ່ໃນ ສະຫລາກ ຫຼື
- ຕໍ່ກອ່ງ ທີ່ສະຫນອງເປັນຈຳນວນຂອງກ່ອງ ທີ່ໄດ້ບັນຈຸໃນຫີບຫໍ່ທີ່ໄດ້ກ່າວໄວ້.

(ຈ) ທາດບຳລຸງລ້ຽງ ຕ້ອງໄດ້ສະແດງອອກເປັນຕົວເລກ

(ສ) ຖ້າຫາກມີຂໍ້ກ່າວອ້າງ ຕ້ອງໄດ້ແຈ້ງປະລິມານຂອງທາດບຳລຸງລ້ຽງ ທີ່ສະແດງເປັນຫົວໜ່ວຍ ເມຕຼິກ ຕໍ່ 100 g ຫຼື ຕໍ່ 100 ml, ແລະ/ຫຼື ຕໍ່ການກິນເທື່ອນຶ່ງ (per serving)

(ຊ) ການແຈ້ງບັນດາທາດບຳລຸງລ້ຽງ ແມ່ນຕ້ອງໄດ້ປະຕິບັດຕາມການກຳນົດ ສຳລັບອາຫານ ທີ່ມີຂໍ້ກ່າວ ອ້າງ ທາງດ້ານໂພຊະນາການ

(ດ) ຂໍ້ກ່າວອ້າງຂອງການບັນຈຸທາດບຳລຸງລ້ຽງ, ຂໍ້ກ່າວອ້າງຂອງການສົມທຽບທາດບຳລຸງລ້ຽງ ແລະ ຂໍ້ ກ່າວອ້າງຂອງຫນ້າທີ່ການຂອງທາດບຳລຸງ ອາດຖືກອະນຸຍາດ ໃຫ້ບັນລຸເງື່ອນໄຂຕ່ຳສຸດ ຕາມຂໍ້ ແນະນຳຂອງກົດລະຫັດອາຫານ (Codex Guidelines) ສຳລັບການນຳໃຊ້ ຂໍ້ກ່າວອ້າງທາງ ດ້ານສຸຂະພາບ ແລະ ໂພຊະນາການ (Nutrition and Health claims).

3 ຂໍ້ກ່າວອ້າງ, ເຄື່ອງໝາຍ ຫຼື ກາໝາຍ ທີ່ສະແດງເຖິງລະດັບ, ຄຸນນະພາບທີ່ດີຂອງຜະລິດຕະພັນ ຢູ່ໃນ ສະຫລາກ ເຊັ່ນ: ອາຫານທຳມະຊາດ, ອາຫານປອດສານພິດ, ອາຫານອິນຊີ ຕ້ອງໄດ້ຮັບຮອງດ້ານມາດຕະຖານຈາກກະຊວງກະສິກຳ ແລະ ປ່າໄມ້ ແລະ ຂະແໜງການທີ່ ກ່ຽວຂ້ອງ.

## ໝວດທີ III
## ບັນດາຂໍ້ຫ້າມ

### ມາດຕາ 7. ຂໍ້ຫ້າມໃນການກ່າວອ້າງ

ຫ້າມມີການກ່າວອ້າງ ດັ່ງລຸ່ມນີ້ :

(ກ.) ການກ່າວອ້າງປະສິດທິພົນຂອງອາຫານ ທີ່ນຳໃຊ້ເພື່ອປ້ອງກັນ, ຫຼຸດຜ່ອນ, ບຳບັດ ຫຼື ປິ່ນປົວພະຍາດ, ຄວາມບົກຜ່ອງ ຫຼື ເງື່ອນໄຂທາງດ້ານສາລີລະອື່ນໆ

(ຂ.) ການກ່າວອ້າງປະສິດທິພົນ ທີ່ກ່າວເຖິງການສະໜອງຢ່າງພຽງພໍ ແຫຼ່ງຂອງທຸກທາດບຳລຸງລ້ຽງທີ່ຈຳເປັນ.

(ຄ) ການກ່າວອ້າງປະສິດທິພົນ ທີ່ມີຄວາມໝາຍເຖິງການດຸນດ່ຽງທາດບຳລຸງລ້ຽງ ທີ່ອາຫານທຳມະດາ ບໍ່ສາມາດສະຫນອງຢ່າງພຽງພໍໄດ້.

(ງ) ການກ່າວອ້າງປະສິດທິພົນ ຊຶ່ງເຮັດໃຫ້ມີຄວາມສົງໃສກ່ຽວກັບຄວາມປອດໄພຂອງອາຫານ ທີ່ຄ້າຍຄືກັນ ຫຼື ເຮັດໃຫ້ມີພຶດຕິກຳຢ້ານກົວແກ່ຜູ້ບໍລິໂພກ.

(ຈ) ການກ່າວອ້າງປະສິດທິພົນ ຂອງທາດເພີ້ມ ຫຼື ທາດບາລຸງລ້ຽງທີ່ບໍ່ໄດ້ອະນຸຍາດ ຫຼື ບໍ່ໄດ້ບັນຈຸໃສ່ໃນ ອາຫານ.

(ສ) ການກ່າວອ້າງວ່າ ມີສ່ວນປະກອບຂອງຊີ້ນງົວ ຫຼື ຊີ້ນໝູ ຫຼື ຜະລິດຕະພັນຂອງຊີ້ນດັ່ງກ່າວ ຫຼື ນ້ຳມັນໝູ ຫຼື ເພີ້ມເຫຼົ້າ , ແຕ່ອາຫານນັ້ນພັດບໍ່ມີສ່ວນປະກອບດັ່ງກ່າວ. ຫຼື ກົງກັນຂ້າມ, ການກ່າວອ້າງ ການ ບໍ່ມີສ່ວນປະກອບຂອງຊີ້ນງົວ ຫຼື ຊີ້ນໝູ ຫຼື ຜະລິດຕະພັນຂອງຊີ້ນດັ່ງກ່າວ ຫຼື ນ້ຳມັນໝູ ຫຼື ເພີ້ມເຫຼົ້າ ແຕ່ຜະລິດຕະພັນອາຫານນັ້ນ ພັດມີສ່ວນປະກອບຂອງທາດດັ່ງກ່າວ.

ຊ) ການກ່າວອ້າງປະສິດທິພົນ ຂອງຜະລິດຕະພັນຕົນ ດີກ່ວາຜະລິດຕະພັນອື່ນທີ່ຄ້າຍຄືກັນ, ແຕ່ພັດບໍ່ສາມາດພິສູດໄດ້.

## ໝວດທີ IV
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 8. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້, ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍຕາມຄວາມເໝາະສົມ ຕາມການກຳນົດຂອງກະຊວງສາ ທາລະນະສຸກ.

### ມາດຕາ 9. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ຫລື ການຈັດຕັ້ງໃດນຶ່ງ ຫາກໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ ຫຼື ປັບໃໝ ຕາມແຕ່ລະກໍລະນີ ດັ່ງລຸ່ມນີ້ :

**<u>ຜູ້ລະເມີດຄັ້ງທີ່ 1</u>**: ສຶກສາອົບຮົມ, ກ່າວເຕືອນແລະບັນທຶກໄວ້ໃນປື້ມຕິດຕາມ.

**<u>ຜູ້ລະເມີດຄັ້ງທີ່2</u>**: ບໍ່ພິຈາລະນາຂຶ້ນທະບຽນຜະລິດຕະພັນອາຫານ ແລະ ອາຫານເສີມ, ຖ້າພົບເຫັນ ຈະ ອາຍັດ ຫຼື ຢຶດສິນຄ້າ ແລະ ປັບໃຫມ ຕາມມູນຄ່າຂອງສິນຄ້າ.

**<u>ຜູ້ລະເມີດຄັ້ງທີ່3</u>**: ສະເໜີພາກສ່ວນທີ່ກ່ຽວຂ້ອງ ບໍ່ອະນຸຍາດໃຫ້ຜະລິດ, ນຳເຂົ້າ ແລະ ຈໍລະຈອນ ຈຳ ຫນ່າຍ ຜະລິດຕະພັນນັ້ນ.

ການລະເມີດ ບໍ່ວ່າຈະເປັນ ຄັ້ງທີ 1, 2 ຫລື 3 ກໍ່ຕາມ ຖ້າຫາກສິ່ງຜົນກະທົບອັນຮ້າຍ ແຮງຕໍ່ສຸ ຂະພາບ, ເສດຖະກິດ ຫຼື ເຖິງແກ່ຊີວິດຂອງຜູ້ບໍລິໂພກ ແມ່ນຈະຖືກດຳເນີນຄະດີ ຕາມ ລະບຽບກົດຫມາຍ

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 10. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອາຫານແລະຢາ ເປັນເຈົ້າການໃນການຜັນຂະຫຍາຍ ແລະ ສົມທົບກັບຂະແໜງການ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ປະກົດຜົນເປັນຈິງ.

**ມາດຕາ 11. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ຂໍ້ຕົກລົງ ແລະ ລະ ບຽບການສະບັບໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ອນແຕ່ຖືກລົບລ້າງ.

**ລັດຖະມົນຕີວ່າການກະຊວງສາທາລະນະສຸກ**

ດຣ. ປອນເມກ ດາລາລອຍ